ກຳລັງທັບເສຣີປະຊາທິປະໄຕລາວ
Lao Liberal Democratic Movement & Freedom Fighters
Central Representative P. O. Box 189486. 2121 Broadway St. Sacramento, CA. 95818. U.S.A.
P.O Box 189486. 2121 Broadway St. Sacramento. CA 95818 U.S.A.
www.laofreedom.com

**ສູນກາງຕາງໜ້າ**
**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ.**
*** ຫ້ອງການ ປະທານພັກເສຣີປະຊາທິປະໄຕລາວ.**
**ເລກທີ ໔໕ງ/ປພຖຂ/໓໑໓໐໙**

# ບົດຄວາມ

## ຜົນກະທົບຈາກເຂື່ອນດອນສະຫົງ

ພັກຣັດວຽງຈັນ ກັບ ບໍຣິສັທ Mega First Corporation Berhad ຂອງ ມາເລເຊັຽ ໄດ້ ເຊັນບົດບັນທຶກຄວາມເຂົ້າໃຈ ກ່ຽວກັບ ໂຄງການກໍ່ສ້າງເຂື່ອນໄຟຟ້ານໍ້າຕົກດອນສະຫົງ ໃນເດືອນ ມີນາ2006, ໂຄງການນີ້ ໃຊ້ງົບປະມານ 300 ລ້ານດອນລາສະຫະຣັດ, ຈະກໍ່ສ້າງໃຫ້ແລ້ວໃນປີ 2010 ແລະຈະໄດ້ ພລັງງານໄຟຟ້າ ເຖິງ 240Mw.

ຖ້າພັກຣັດວຽງຈັນ ສ້າງເຂື່ອນນີ້ຂຶ້ນ ແລ້ວ ເມີນເສີຍ ບໍ່ເອົາຫົວຊາ ຕໍ່ ການຄັດຄ້ານ ຂອງ ປະຊາຊົນລາວ, ຂອງອົງການຈັດຕັ້ງສາກົນ ແລະອົງການທີ່ບໍ່ຂຶ້ນກັບຣັຖບານ (NGO) ກ່ຽວກັບ ສະພາບ ແວດລ້ອມແລ້ວ, ແນ່ນອນວ່າ ຜົນກະທົບຕໍ່ຣະບົບນິເວດ, ຕໍ່ຣະບົບເສຖກິດແລະສັງຄົມ ກໍ່ຈະເກີດມີຂຶ້ນ ຢ່າງໃຫຍ່ຫລວງ... ຍ້ອນເລວນໍ້າ ຫລື ແປວນໍ້າດອນສະຫົງ ມີບົດບາດສຳຄັນ ໃນການເຄື່ອນຍ້າຍຂອງປາ ໃນລຳແມ່ນໍ້າຂອງໄດ້ທຸກໆຣະດູການ. ນອກຈາກນີ້, ຢູ່ທາງໃຕ້, ຍັງເປັນແຫລ່ງນໍ້າຈືດ (ຕົງເລສາບ) ຊຶ່ງ ໃຫ້ຜົນປໂຍດສູງສຸດ ສຳລັບການຈັບປາໃນໂລກ. ດັ່ງນັ້ນ, ການຈັບປາ ຈຶ່ງມີ ສ່ວນສຳຄັນ ທາງດ້ານ ເສຖກິດ ຂອງຊາດ, ຂອງພູມີພາກ ແລະການດຳຣົງຊີວິດ ຂອງປະຊາຊົນ ໃນທ້ອງຖິ່ນນັ້ນໆອີກດ້ວຍ.

ບົດວິຈັຍທາງດ້ານວິທຍາສາດ ໄດ້ຣະບຸຄວາມສຳຄັນ ຂອງເລວນໍ້າດອນສະຫົງ ວ່າ"ມີລັກສນະ ຄ້າຍຄືກັບຄໍແກ້ວ ທີ່ເອື້ອອຳນວຍ ໃຫ້ການເຄື່ອນຍ້າຍຂອງປາ ໃນແມ່ນໍ້າຂອງ ໄດ້ສດວກ

ພຽງບ່ອນດຽວເທົ່ານັ້ນ ທີ່ປາຂຶ້ນໄດ້ ໃນຣະດູແລ້ງ"; ເພາະນໍ້າຕົກບໍ່ແຮງແລະບໍ່ມີສິ່ງກີດຂວາງຈາກທັມຊາດ. ການເຄື່ອນຍ້າຍ ຂອງປາຊນິດຕ່າງໆຕາມຣະດູການ ມີເຖິງ 87%, ໃນນັ້ນ ລວມທັງປາທີ່ມີຄ່າສູງ ທາງການຄ້າ ນໍາດ້ວຍ. ຕາມປົກະຕິແລ້ວ, ໃນເດືອນ ເມສາ, ປາຍອນ ໝູ່ທໍາອິດ, ກໍຈະຂຶ້ນມາ ຮອດຄອນພະເພັງ ແລະກໍໄດ້ຈັບປາ ເປັນຈໍານວນຫລວງຫລາຍ ຢູ່ລະຫວ່າງດອນສະດໍາ ແລະດອນສະຫົງ.

ສນັ້ນ, ການສ້າງເຂື່ອນຕັນທາງຂຶ້ນຂອງປາ ຈິ່ງມີຜົນກະທົບ ຕໍ່ສະພາບເສຖກິດຂອງປະເທດ ຢ່າງຫລວງຫລາຍ, ເພາະການຈັບປານັ້ນ, ໄດ້ຫລາຍເຖິງ 64,600 ໂຕນ. ເທົ່າກັບ 78% ຂອງ ຜົນຜລິດປາທັງໝົດ ໃນປະເທດ, ມີມູນຄ່າ ລະຫວ່າງ 66 ເຖິງ 100 ລ້ານດອນລາສະຫະຣັດ ຕໍ່ປີ. ນອກຈາກນີ້, ມັນຍັງເປັນການທໍາລາຍຣະບົບຊີວະຊາດ ຢ່າງຮ້າຍແຮງຕື່ມອີກ. ຢູ່ເຂດພື້ນທີ່ ຄອນພະເພັງ ເປັນບ່ອນຢູ່ຂອງປາຫລາຍກວ່າ 201 ຊະນິດພັນປາ, ໃນນັ້ນ, ລວມທັງປາ ທີ່ໃກ້ຈະສູນພັນ, ເຊັ່ນ: ປາສະອີ, ປາເອີນຕາແດງ ແລະປາຂ່າ ຫລື ປາໂລມານໍ້າຈືດ. ຝູງປາເຫລົ່ານີ້ ກໍຈະຍົກຍ້າຍຜ່າຍໜີ ແລະສູນພັນໄປໃນທີ່ສຸດ.

ເຖິງແມ່ນວ່າ ຈະມີແຜນຫລຸດຜ່ອນ ຜົນກະທົບ ຈາກການສ້າງເຂື່ອນ ດ້ວຍການສ້າງອ່າງເກັບນໍ້າ ເພື່ອການປະມົງ... ກໍບໍ່ສາມາດ ທົດແທນຄວາມເສັຽຫາຍໄດ້ ເພາະມີແຕ່ 9 ຊະນິດພັນປາເທົ່ານັ້ນ ທີ່ເພາະພັນໄດ້ ຢູ່ໃນອ່າງເກັບນໍ້າ ແລະການສ້າງເສັ້ນທາງເດີນຂອງປາ ກໍບໍ່ສາມາດແກ້ໄຂບັນຫາ ການສູນເສັຽນີ້ໄດ້! ຍ້ອນບັນຫາດ້ານນິເວດ ແລະການເຄື່ອນຍ້າຍຂອງປາ ໃນບາງແຫ່ງ ຂອງອ່າງແມ່ນໍ້າຂອງ ມີຈໍານວນຫລາຍ ເຖິງ30 ໂຕນ ຕໍ່ຊົ່ວໂມງ.

ການສ້າງເຂື່ອນຕັນທາງຂຶ້ນ ຂອງປາຢູ່ດອນສະຫົງນີ້, ນອກຈາກມີຜົນກະທົບ ຕໍ່ສະພາບເສຖກິດ ຂອງຊາດ, ຕໍ່ຣະບົບນິເວດແລ້ວ, ຍັງມີຜົນກະທົບຢ່າງຮ້າຍແຮງ ຕໍ່ຊີວິດການເປັນຢູ່ ຂອງປະຊາຊົນ ອີກດ້ວຍ. ຍ້ອນວ່າ ປາ ມີຄວາມສໍາຄັນຍິ່ງ ຕໍ່ການດໍາຣົງຊີວິດ ຂອງປະຊາຊົນທ້ອງຖິ່ນ ແລະ ຄວາມໝັ້ນຄົງທາງສະບຽງອາຫານ. ປາ ເປັນອາຫານປະຈໍາຄາບເຂົ້າ ຂອງແຕ່ລະຄົວເຮືອນ ຫລາຍກວ່າ 80% ແລະຣາຍໄດ້ຂອງປະຊາຊົນລາວ ທາງພາກໃຕ້ ແມ່ນມາຈາກການຂາຍປາ ເຖິງ 20%.

ໃນທົສະວັດ 1960, 1970 ແລະ 1980, ຣັຖບານລາວ ໄດ້ມີຄໍາສັ່ງ ເກືອດຫ້າມການຈັບປາ ໃນແລວນໍ້າດອນສະຫົງ ທີ່ຂຶ້ນກັບເຂດຄອນພະເພັງ ເພື່ອໃຫ້ປາ ໄດ້ເຄື່ອນຂຶ້ນໄປທາງເໜືອ; ຖ້າປາ ບໍ່ສາມາດເຄື່ອນຍ້າຍ ຜ່ານຄອນດອນສະຫົງໄດ້... ປະຊາຊົນ ທີ່ອາສັຍຢູ່ທາງເໜືອ ນັບແຕ່ເຂດ ເມືອງໂຂງ ຂຶ້ນໄປ ກໍຈະບໍ່ມີປາກິນ. -ອັນນີ້, ພັກຣັດ ໄດ້ເຮັດຖືກຕ້ອງທີ່ສຸດແລ້ວ! ບໍ່ພຽງແຕ່ ເປັນການປົກປັກຮັກສາ ສະພາບແວດລ້ອມເທົ່ານັ້ນ, ຍັງເປັນການອໍານວຍຄວາມສດວກ ໃຫ້ແກ່ປະຊາຊົນ ໄດ້ສ້າງສາທໍາມາຫາກິນ ຢ່າງມີຄວາມສຸຂຕື່ມອີກ... ແຕ່ກັບມາດຽວນີ້, ອຸດົມການຊາດ ທີ່ພັກຣັດ ເຄີຍອວດອ້າງວ່າ "ເປັນຜູ້ ຮັກຊາດ ຮັກປະຊາຊົນ ດ້ວຍຄວາມບໍຣິສຸດໃຈນັ້ນ, ໄດ້ກັບກາຍມາເປັນ ອຸດົມການ ນາຍກໍາໄຣ ແຕ່ຢ່າງດຽວ" ກອບໂກຍເອົາຜົນປໂຍດ ຈາກການມີອໍານາດນັ້ນ ເຂົ້າມາເປັນຂອງຕົນ ແລະພັກພວກ ຢ່າງບໍ່ໄດ້ຄໍານຶງ ເຖິງຄວາມເສັຽຫາຍຂອງຊາດ ແລະຄວາມເດືອດຮ້ອນຂອງປະຊາຊົນ ແຕ່ຢ່າງໃດເລີຍ.

ພວກເຮົາປະຊາຊົນພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ ຮຽກຮ້ອງມາຍັງອົງການຈັດຕັ້ງສາກົນ ແລະອົງການທີ່ບໍ່ຂຶ້ນກັບຣັຖບານ (NGO) ຈົ່ງໄດ້ສືບຕໍ່ຄັດຄ້ານການສ້າງເຂື່ອນດອນສະຫົງນີ້. ຂໍໃຫ້ອົງການຊ່ວຍເຫລືອສາກົນ ທີ່ມີຢູ່ໃນລາວປັຈຸບັນ ຜູ້ມີໂອກາດເຂົ້າເຖິງປະຊາຊົນຈົ່ງໄດ້ໃຫ້ຄວາມຮູ້ ແລະຂໍ້ມູນຕ່າງໆ ໃນການກອບໂກຍ, ສໍ້ຣາດບັງຫລວງຂອງພັກຣົດ ໃນໂຄງການກໍ່ສ້າງ. ທຽບໃສ່ຄວາມທຸກຍາກລຳບາກ,ຄວາມເດືອດຮ້ອນຂອງປະຊາຊົນ ທີ່ຈະໄດ້ຮັບ ຈາກຜົນກະທົບຂອງການສ້າງເຂື່ອນ.

ພ້ອມດຽວກັນນີ້, ພວກເຮົາ ກໍຂໍໃຫ້ທາງທະນາຄານໂລກ, ທະນາຄານພັທນາເອເຊັ້ຽ ແລະສະຖາບັນການເງິນຕ່າງໆຈົ່ງຢ່າໄດ້ ອະນຸມັດເງິນກູ້ ໃນການສ້າງເຂື່ອນດ້ວຍ. ເພາະການສ້າງເຂື່ອນຢ່າງຫລວງຫລາຍຂອງພັກຣັດວຽງຈັນ ບໍ່ແມ່ນການແກ້ໄຂຕົ້ນຕໍຂອງບັນຫາທີ່ມີຢູ່ໃນປະຈຸບັນນີ້.

ຕົ້ນຕໍຂອງບັນຫາ ກໍຄື ການມອບສິດທິເສຣີພາບ ທີ່ພັກຣັດໄດ້ປຸ້ນຈີ້ເອົາໄປ ເປັນຂອງຕົນນັ້ນ ຄືນໃຫ້ແກ່ປະຊາຊົນ ດ້ວຍການປ່ຽນຣັຖບານໂດຍໄວເທົ້ານັ້ນເອງ.

**ສູນກາງຕາງໜ້າ**
**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ**
**ກອງວິຈັຍ**
**ວັນທີ ໑໕ ມີນາ ໒໐໐໘**